ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ
ອົງການກວດສອບບັນຊີແຫ່ງລັດ ເລກທີ. 24 /ອກບລ

ນະຄອນຫລວງວຽງຈັນ, ວັນທີ: 26.4.06

ຮຽນ: ທ່ານຮອງນາຍົກລັດຖະມົນຕີ, ປະທານສະພາບໍລິຫານທະນາຄານແຫ່ງ ສປປ ລາວ ທີ່ນັບຖືຢ່າງສູງ.

ເລື້ອງ: ລາຍງານຜົນການກວດສອບບັນຊີປະຈຳປີ 2003 ແລະ 2004

ອົງການກວດສອບບັນຊີແຫ່ງລັດ ໄດ້ກວດສອບໃບສະຫລຸບຊັບສົມບັດ, ໃບລາຍງານຜົນໄດ້ຮັບ ແລະ ບັນດາເອກະສານຊ້ອນທ້າຍບົດສະຫລຸບບັນຊີປະຈຳປີ 2003 ແລະ 2004 ຂອງທະນາຄານແຫ່ງ ສປປ ລາວ ຮອດວັນທີ 31 ທັນວາ 2003 ແລະ 2004.

ບັນດາຕົວເລກທີ່ສະແດງອອກຢູ່ໃນບົດສະຫລຸບບັນຊີປະຈຳປີ 2003 ແລະ 2004 ແມ່ນຂໍ້ມູນທີ່ຖືກຮັບຮອງ ແລະ ເປັນຄວາມຮັບຜິດຊອບຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ເປັນຜູ້ສະຫລຸບລາຍງານບົນພື້ນຖານທົ່ວໜ່ວຍໜຶ່ງກົບ. ຄວາມຮັບຜິດຊອບຂອງອົງການກວດສອບບັນຊີແຫ່ງລັດ ມີໜ້າທີ່ສະແດງຄຳເຫັນຕໍ່ເອກະສານລາຍງານການເງິນດັ່ງກ່າວ.

ການກວດສອບ, ອົງການກວດສອບບັນຊີແຫ່ງລັດໄດ້ດຳເນີນການກວດສອບຕາມລະບຽບກົດໝາຍຂອງ ສປປ ລາວ, ມາດຕະຖານການກວດສອບຂອງສາກົນ, ແລະ ພາຍໃຕ້ຜົນສຳເລັດຂອງການຮ່ວມມືກັນລະຫວ່າງ ອົງການກວດສອບບັນຊີແຫ່ລັດ ກັບກອງທຶນສາກົນ (IMF), ບົນພື້ນຖານບັນດາລະບຽບຫລັກການ ແລະ ມາດຕະຖານການກວດສອບດັ່ງກ່າວ ອົງການກວດສອບບັນຊີແຫ່ງລັດ ໄດ້ແຕ່ງຕັ້ງຄະນະກວດສອບ, ວາງແຜນ ແລະ ດຳເນີນການກວດສອບຫລັກຖານອ້າງອີງເຖິງຈຳນວນເງິນ ແລະ ບັນດາຂໍ້ມູນຕ່າງໆທີ່ສະແດງອອກຢູ່ເອກະສານລາຍງານການເງິນ.

ບັນດາຂໍ້ສັງເກດ ແລະ ຄຳເຫັນຂອງອົງການກວດສອບບັນຊີແຫ່ງລັດ ແມ່ນຄຳເຫັນທີ່ເປັນເອກະລາດ ໂດຍອີງໃສ່ຂໍ້ມູນ, ຫລັກຖານ ແລະ ສະພາບຄວາມເປັນຈິງ ຂອງເປົ້າໝາຍທີ່ໄດ້ກວດສອບ ຊຶ່ງເນື້ອໃນຂອງຂໍ້ສັງເກດມີດັ່ງນີ້:

ການຈັດຕັ້ງປະຕິບັດລະບຽບກົດໝາຍ ແລະ ລະບົບຄວບຄຸມພາຍໃນຂອບວຽກງານການຄຸ້ມຄອງການເງິນຈຳນວນໜຶ່ງ ດັ່ງທີ່ໄດ້ຍົກຂຶ້ນໃນຈົດໝາຍແນະນຳຍັງປະຕິບັດບໍ່ທັນໄດ້ດີເທົ່າທີ່ຄວນ.

ນອກຈາກລາຍການດັ່ງທີ່ໄດ້ຍົກຂຶ້ນຢູ່ໃນຈົດໝາຍແນະນຳ ອົງການກວດສອບບັນຊີແຫ່ງລັດເຫັນວ່າ: ຂໍ້ມູນຕ່າງໆທີ່ສະແດງອອກຢູ່ໃນເອກະສານລາຍງານການເງິນປະຈຳປີ 2003 ແລະ 2004 ຂອງທະນາຄານແຫ່ງ ສປປ ລາວ ທີ່ສິ້ນສຸດໃນວັນທີ 31 ທັນວາ ຂອງແຕ່ລະປີ ສະແດງອອກຢ່າງຄົບຖ້ວນ ແລະ ຖືກຕ້ອງທີ່ສຸດກັບຖານະການເງິນຕົວຈິງ. ນອກນັ້ນ ການຈັດຕັ້ງປະຕິບັດລະບຽບກົດໝາຍຕ່າງໆ ທີ່ມີຜົນບັງຄັບໃຊ້ຢູ່ ສປປ ລາວ ໂດຍສ່ວນໃຫຍ່ແລ້ວທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານຮອງນາຍົກລັດຖະມົນຕີ, ປະທານສະພາບໍລິຫານທະນາຄານແຫ່ງ ສປປ ລາວ ເພື່ອຊາບ.

ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ,

ຫົວໜ້າອົງການກວດສອບບັນຊີແຫ່ງລັດ

ສາດສະດາຈານ ດຣ. ສຸລິ ບັນທະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

ອົງການກວດສອບບັນຊີແຫ່ງລັດ ເລກທີ. 25 /ອກບລ

ນະຄອນຫລວງວຽງຈັນ, ວັນທີ: 26.4.06

**ຈົດໝາຍແນະນຳ**

ຮຽນ: ທ່ານຮອງນາຍົກລັດຖະມົນຕີ, ປະທານສະພາບໍລິຫານທະນາຄານແຫ່ງ ສປປ ລາວ ທີ່ນັບຖືຢ່າງສູງ.

ເລື້ອງ: ຂໍ້ສັງເກດ ແລະ ຄຳແນະນຳວິທີການປັບປຸງແກ້ໄຂໂດຍສັງເຂບຜ່ານການກວດສອບບັນຊີທະນາຄານແຫ່ງ ສປປ ລາວ ປະຈຳປີ 2003 ແລະ 2004.

ຜ່ານການກວດສອບບັນຊີທະນາຄານແຫ່ງ ສປປ ລາວ ປະຈຳປີ 2003 ແລະ 2004 ຄະນະ ກວດສອບບັນຊີມີຂໍ້ສັງເກດຕໍ່ກັບລະບົບການຄວບຄຸມພາຍໃນ ແລະ ຂໍ້ມູນຈຳນວນໜຶ່ງ ທີ່ເຫັນວ່າຈະ ຕ້ອງໄດ້ມີການປັບປຸງແກ້ໄຂຕໍ່ໜ້າ ເຊິ່ງບັນດາຂໍ້ສັງເກດຕ່າງໆ ລາຍລະອຽດເປັນແຕ່ລະດ້ານ ມີດັ່ງນີ້:

1. **ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ.**

ທະນາຄານແຫ່ງ ສປປ ລາວ ຍັງຂາດຄວາມເປັນເຈົ້າການ ໃນການປະຕິບັດມາດຕາ 20 ກ່ຽວກັບວຽກກວດສອບບັນຊີຈາກພາຍນອກ ເຫັນໄດ້ຢູ່ບ່ອນວ່າ ບັນຊີປະຈຳປີ 2003 ແລະ 2004 ຖືກປະຕິບັດໃນເວລາດຽວກັນ.

**<u>ຄຳແນະນຳ</u>**

ເພື່ອປະຕິບັດຕາມລະບຽບກົດໝາຍ ສະເໜີໃຫ້ທະນາຄານຈັດຕັ້ງການກວດສອບໃຫ້ທັນຕາມກຳນົດເວລາ.

**<u>ຄຳເຫັນຂອງຄະນະນຳທະນາຄານ</u>**

ທະນາຄານແຫ່ງ ສປປ ລາວ ເຫັນດີ ແລະ ປະຕິບັດຕາມການແນະນຳຂອງຄະນະກວດສອບ.

## 2. ລະບົບບັນຊີ, ໂປຣແກຣມບັນຊີ ແລະ ການສ້າງເອກະສານລາຍງານການເງິນ.

2.1. ໂປຣແກຣມບັນຊີທີ່ທະນາຄານນຳໃຊ້ໃນປະຈຸບັນ ເຫັນວ່າຍັງບໍ່ທັນໄດ້ມາດຕະຖານສາກົນ, ລາຍການເຄື່ອນໄຫວຂອງບັນຊີໃດໜຶ່ງ ບໍ່ສະດວກໃນການຊອກຫາບັນຊີພົວພັນ, ຖ້າຕ້ອງການຢາກຮູ້ບັນຊີພົວພັນຕ້ອງໄດ້ເບິ່ງໃນໂປຣແກຣມບັນຊີ ຫຼື ເບິ່ງໃນເອກະສານຢັ້ງຢືນທີ່ໄດ້ເກັບຮັກສາໄວ້ເບື້ອງໜຶ່ງ, ເບື້ອງມີຈັດໄວ້ເບື້ອງມີ ເຊິ່ງຕ້ອງໄດ້ໃຊ້ເວລາ ແລະ ເຮັດໃຫ້ວຽກງານກວດສອບມີຂໍ້ຈຳກັດ.

2.2. ເນື້ອໃນບັນຊີຂອງບາງເລກໝາຍບັນຊີຢູ່ໃນສາລະບານບໍ່ມີຄວາມໝາຍຊັດເຈນ, ອ່ານແລ້ວບໍ່ໄດ້ຄວາມໝາຍເປັນເຫດໃຫ້ການບັນທຶກບັນຊີ ເພື່ອນຳໃຊ້ຕິດຕາມລາຍການທາງດ້ານການເງິນຈຳນວນໜຶ່ງມີການປ່ຽນແປງ. ບັນຫານີ້ເຮັດໃຫ້ການປຽບທຽບຕົວເລກປີນີ້ ກັບປີຜ່ານມາມີຄວາມຫຍຸ້ງຍາກ;

2.3. ປຶ້ມຄູ່ມືແນະນຳກ່ຽວກັບວຽກງານການເງິນ - ການບັນຊີ ທີ່ທະນາຄານໄດ້ສ້າງຂຶ້ນແລ້ວໃນປະຈຸບັນແມ່ນປຶ້ມຄູ່ມືທີ່ເວົ້າແບບລວມໆ, ສ່ວນປຶ້ມຄູ່ມືແນະນຳທີ່ເປັນອັນລະອຽດນັ້ນ ບາງໜ່ວຍງານຍັງບໍ່ທັນມີ;

2.4. ບັນຊີລາຍຮັບ ແລະ ລາຍຈ່າຍ ຖືກສະສາງຢູ່ໃນບັນຊີດຸ່ນດ່ຽງປະຈຳເດືອນ 12 ຂອງທຸກໆປີ;

2.5. ທະນາຄານຍັງບໍ່ທັນໄດ້ສ້າງບົດສະຫລຸບກ່ຽວກັບກະແສຄັງເງິນລວມ (Cash flow);

**<u>ຄຳແນະນຳ</u>**

- ສະເໜີໃຫ້ປັບປຸງໂປຣແກຣມບັນຊີ ແລະ ໃຫ້ສາມາດພິມເອກະສານລາຍງານການເງິນໃຫ້ຄົບຖ້ວນ;

- ສ້າງປຶ້ມຄູ່ມືແນະນຳກ່ຽວກັບລະບຽບວິທີປະຕິບັດງານດ້ານບັນຊີການເງິນໃຫ້ລະອຽດກ່ວາເກົ່າ;

- ການສະສາງບັນຊີລາຍຮັບ ແລະ ລາຍຈ່າຍ ສະເໜີໃຫ້ເຮັດເປັນໃບໜຶ່ງຕ່າງຫາກ ຫລັງຈາກໄດ້ເຮັດໃບດຸ່ນດ່ຽງປະຈຳປີ ຄື ການສ້າງໃບດຸ່ນດ່ຽງກ່ຽວກັບການສະສາງ ລາຍຮັບ ແລະ ລາຍຈ່າຍ ໃຫ້ເອົາຍອດເຫຼືອທ້າຍໃບດຸ່ນດ່ຽງປະຈຳປີທັງໝົດໄປເປັນ ຍອດເຫຼືອຕົ້ນ. ຈາກນັ້ນ ບັນຊີລາຍຈ່າຍສະແດງອອກຢູ່ຫ້ອງລາຍການເຄື່ອນໄຫວ ທາງເບື້ອງມີ ເຊິ່ງລວມ ຍອດບັນຊີລາຍຈ່າຍ ຈະສະແດງອອກຢູ່ຫ້ອງລາຍການ ເຄື່ອນໄຫວທາງເບື້ອງໜີ້ ແລະ ບັນຊີລາຍຮັບ ສະແດງອອກຢູ່ຫ້ອງລາຍການເຄື່ອນ ໄຫວທາງເບື້ອງໜີ້ ເຊິ່ງລວມຍອດບັນຊີລາຍຮັບສະແດງອອກຢູ່ບັນຊີຜົນໄດ້ຮັບທາງ ມີ. ໃນທີ່ສຸດຜິດດ່ຽວລະຫວ່າງລາຍຮັບ ແລະ ລາຍຈ່າຍ ຈະສະແດງອອກຢູ່ຍອດ ເຫຼືອທ້າຍຂອງບັນຊີຜົນໄດ້ຮັບ ພ້ອມກັບບັນຊີອື່ນໆ ທີ່ຕ້ອງນຳໄປສັງລວມເຂົ້າໃນໃບ ສະຫລຸບຊັບສົມບັດ.

<u>**ຄຳເຫັນຂອງຄະນະນຳທະນາຄານ**</u>

ເຫັນດີຕາມຂໍ້ສັງເກດ ແລະ ຈະມີການປັບປຸງຕາມການແນະນຳຂອງຄະນະກວດສອບ;

### 3. ການຄຸ້ມຄອງບັນຊີເງິນຝາກນຳທະນາຄານ ແລະ ສະຖາບັນການເງິນຢູ່ພາຍໃນ ແລະ ຕ່າງປະເທດ.

ໂດຍປະຕິບັດຕາມການອະນຸມັດຂອງລັດຖະບານ ທະນາຄານແຫ່ງ ສປປ ລາວ ໄດ້ເປີດ ຫຼື ມີບັນຊີເງິນຝາກທະນາຄານ ແລະ ສະຖາບັນການເງິນຢູ່ຕ່າງປະເທດມີຫລາຍບັນຊີສົມຄວນ. ຜ່ານການສົມທຽບຕົວເລກຍອດເຫຼືອເປັນແຕ່ລະບັນຊີຢູ່ໃນບັນຊີສຳຮອງ (Bank Statement) ທີ່ໄດ້ຮັບຈາກຕ່າງປະເທດ ກັບຕົວເລກຍອດເຫຼືອໃນບັນຊີຂອງທະນາຄານແຫ່ງ ສປປ ລາວ ມີ ບາງບັນຊີມີຍອດເຫຼືອບໍ່ກົງກັນນັ້ນ ບໍ່ຮູ້ວ່າລາຍການໃດທີ່ເປັນສາເຫດເຮັດໃຫ້ຕົວເລກຍອດເຫຼືອ ບໍ່ກົງກັນ ເນື່ອງຈາກວ່າ ທະນາຄານແຫ່ງ ສປປ ລາວ ໂດຍສະເພາະກົມບໍລິການທະນາຄານ ບໍ່ໄດ້ເຮັດໃບສົມທຽບທະນາຄານໄວ້ຢ່າງຕໍ່ເນື່ອງ.

<u>**ຄຳແນະນຳ**</u>

ສະເໜີໃຫ້ກວດກາຄືນສຳລັບລາຍການທີ່ເປັນສາເຫດເຮັດໃຫ້ຕົວເລກຍອດເຫຼືອໃນບັນຊີ ຂອງທະນາຄານ ຕົວເລກຍອດເຫຼືອທີ່ສະແດງອອກຢູ່ໃນໃບລອກບັນຊີ (Bank Statement) ທີ່ ໄດ້ຮັບຈາກຕ່າງປະເທດ ພ້ອມນັ້ນແຕ່ລະເດືອນຕ້ອງເຮັດໃບສົມທຽບທະນາຄານໄວ້ທຸກບັນຊີ.

<u>**ຄຳເຫັນຂອງຄະນະນຳທະນາຄານ**</u>

ເຫັນດີ ແລະ ຈະປັບປຸງແກ້ໄຂໃນຕໍ່ໜ້າ.

## 4. ການຈັດຊື້ ແລະ ການຄຸ້ມຄອງຊັບສິນບັດຄົງທີ່.

4.1. ບາງລາຍການຈັດຊື້ບໍ່ມີການສົມທຽບລາຄາ ຫຼື ບໍ່ປະຕິບັດຕາມຂັ້ນຕອນຂອງການຈັດຊື້ ແລະ ບາງລາຍການຈັດຊື້ ມີການສົມທຽບລາຄາພຽງແຕ່ສອງຮ້ານ;

4.2. ບາງຮ່ວງລາຍການຈັດຊື້ ແລະ ສ້ອມແປງໄດ້ປະຕິບັດເກີນ ຫຼື ລື່ນແຜນການທີ່ໄດ້ກຳນົດໄວ້;

**ຄຳແນະນຳ:**

ເພື່ອປະຕິບັດໃຫ້ຖືກຕ້ອງຕາມດຳລັດວ່າດ້ວຍການຈັດຊື້, ການກໍ່ສ້າງ, ສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ແລະ ແຜນການປະຈຳປີ ການຈັດຊື້ທຸກຄັ້ງ ຕ້ອງໃຫ້ມີການສົມທຽບລາຄາຢ່າງໜ້ອຍ 3 ຮ້ານຂຶ້ນໄປ, ການຈັດຊື້ ແລະ ສ້ອມແປງ ຕ້ອງໄດ້ອີງໃສ່ວົງອະນຸມັດ (ແຜນການ).

**ຄຳເຫັນຂອງຄະນະນຳທະນາຄານ**

ເຫັນດີຕາມຂໍ້ສັງເກດ ແລະ ຈະມີການປັບປຸງໃນຕໍ່ໜ້າ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານຮອງນາຍົກລັດຖະມົນຕີ, ປະທານສະພາບໍລິຫານ ທະນາຄານແຫ່ງ ສປປ ລາວ ເພື່ອຊາບ ແລະ ເປັນບ່ອນອີງຈຳນວນໜຶ່ງໃນການພິຈາລະນາ ຄົ້ນຄ້ວາ ປັບປຸງແກ້ໄຂໃນຕໍ່ໜ້າ ຕາມຄວາມເໝາະສົມກັບສະພາບການຕົວຈິງໃນແຕ່ລະໄລຍະ.

ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ,

ຫົວໜ້າອົງການກວດສອບບັນຊີແຫ່ງລັດ

ສາດສະດາຈານ ດຣ. ສຸລິ ບັນທະວົງ

# ໃບລາຍງານຜົນໄດ້ຮັບຮອດມື້ອັດບັນຊີປະຈຳປີ 2002, 2003 ແລະ 2004

ຫົວໜ່ວຍ 1.000 ກີບ

| ເນື້ອໃນລາຍການ | 31/12/2004 | 31/12/2003 | 31/12/2002 |
|---|---|---|---|
| ລາຍຮັບດອກເບັ້ຍ | 30,316,885 | 26,621,258 | 30,351,768 |
| ລາຍຈ່າຍດອກເບັ້ຍ | (7,499,116) | (21,404,366) | (23,367,772) |
| ຍອດສຸດທິ ກ: | 22,817,769 | 5,216,892 | 6,983,996 |
| | | | |
| ລາຍຮັບຄ່າບໍລິການ ແລະ ຄ່າທຳນຽມ | 605,732 | 339,840 | 103,037 |
| ລາຍຈ່າຍຄ່າບໍລິການ ແລະ ຄ່າທຳນຽມ | (176,062) | (230,468) | (3,214,411) |
| ຍອດສຸດທິ ຂ: | 429,670 | 109,372 | (3,111,374) |
| | | | |
| ລາຍຮັບໃນການດຳເນີນທຸລະກິດສຸດທິ | 5,990,058 | 6,914,677 | 7,718,984 |
| ລາຍຮັບອື່ນໆ | 4,237,496 | 3,172,579 | 2,111,197 |
| ລວມຍອດ ຄ: | 10,227,554 | 10,087,256 | 9,830,181 |
| | | | |
| ລວມຍອດ ກ+ຂ+ຄ: | 33,474,893 | 15,413,520 | 13,702,803 |
| | | | |
| ລາຍຈ່າຍໃນການດຳເນີນທຸລະກິດ | (19,248,017) | (19,294,663) | (13,702,803) |
| | | | |
| ລາຍຜິດດ່ຽງທັງໝົດ ລະຫວ່າງລາຍຮັບ ລົບ ລາຍຈ່າຍ | 14,226,876 | (3,881,143) | 0.00 |
| | | | |
| ກຳໄລ ແລະ ຜົນໄດ້ຮັບປະຈຳປີ | 14,226,876 | (3,881,143) | 0,00 |

## ໃບສະຫລຸບຊັບສິນບັດຣອດມື້ອັດບັນຊີປະຈໍາປີ 2002, 2003 ແລະ 2004

ຫົວໜ່ວຍ: 1.000 ກີບ

| ເນື້ອໃນລາຍການ | 31/12/2004 | 31/12/2003 | 31/12/2002 |
|---|---|---|---|
| **ເບື້ອງຊັບສິນ** | | | |
| ເງິນສົດ, ທະນາບັດ ແລະ ວັດຖຸມີຄ່າ | 2.480,071,661 | 2,304,761,900 | 2,180,264,191 |
| ພັນທະບັດຄັງເງິນ | 24,054,413 | 5,148,000 | 11,200,000 |
| ເງິນຝາກ, ເງິນລ່ວງໜ້າ ແລະ ສິນເຊື່ອ ໃຫ້ທະນາຄານອື່ນ | 287,821,948 | 355,117,163 | 360,488,579 |
| ສິນເຊື່ອ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | 723,667,258 | 673,662,284 | 740,901,200 |
| ຫລັກຊັບຄໍ້າປະກັນ | 5,594,728 | 6,644,002 | 6,727,240 |
| ຊັບສິນບັດຄົງທີ່ (ມູນຄ່າຍັງເຫຼືອສຸດທິ) | 15,100,186 | 14,281,018 | 14,834,973 |
| ຊັບສິນອື່ນໆ | 1,090,672,649 | 890,605,738 | 831,160,430 |
| **ລວມຍອດເບື້ອງຊັບສິນ** | **4,626,982,842** | **4,250,220,105** | **4,145,576,619** |
| | | | |
| **ເບື້ອງໜີ້ສິນ** | | | |
| **ໜີ້ສິນ ແລະ ທຶນຂອງທະນາຄານ** | | | |
| ເງິນຝາກ ແລະ ເງິນກູ້ຢືມຈາກທະນາຄານອື່ນ | 2,370,986,957 | 2,272,384,413 | 2,161,345,074 |
| ເງິນຝາກຈາກລູກຄ້າ | 26,725,776 | 16,899,061 | 13,352,440 |
| ເງິນຝາກອື່ນໆ | 9,915,599 | 47,975,097 | 175,666,241 |
| ເງິນກູ້ມາຈາກແຫຼ່ງທຶນອື່ນໆ | 1,438,606,629 | 1,148,863,958 | 1,096,033,462 |
| ໜີ້ສິນອື່ນໆ | 14,548,350 | 5,644,064 | 5,539,133 |
| **ລວມຍອດໜີ້ສິນ** | 3,860,783,311 | 3,491,766,593 | 3,451,936,350 |
| ທຶນ | 0,00 | 0,00 | 0,00 |
| ຄັງສະສົມ | 755,853,790 | 762,334,655 | 693,640,269 |
| ກໍາໄລສະສົມຍົກມາ | (3,881,143) | 0,00 | 0,00 |
| ກໍາໄລປະຈໍາປີ | 14,226,876 | (3,881,143) | 0,00 |
| **ລວມຍອດທຶນ ແລະ ຄັງສະສົມ** | **766,199,532** | **758,453,512** | **693,640,269** |
| **ລວມຍອດເບື້ອງໜີ້ສິນ** | **4,626,982,842** | **4,250,220,105** | **4,145,576,619** |